**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ບໍລິສັດ ຜະລິດ-ໄຟຟ້າລາວມະຫາຊົນ.

ເລກທີ: 2162/ຜ-ຟຟລ
ນະຄອນຫລວງວຽງຈັນ, ວັນທີ 09 OCT 2018

# ແຈ້ງການ

ເຖິງ: ບັນດາທ່ານ ຮັບຊາບກ່ຽວກັບການປິດປະຕູນໍ້າລົ້ນຂອງ ເຂື່ອນໄຟຟ້ານໍ້າງື່ມ 1.

- ອີງຕາມ ໃບສະເໜີ ຂໍອະນຸມັດ ບໍລິຫານນໍ້າໃນອ່າງຂອງເຂື່ອນໄຟຟ້ານໍ້າງື່ມ-1 ໃນຊ່ວງເດືອນ ສິງຫາ - ເດືອນ ຕຸລາ 2018 ສະບັບເລກທີ: 1653/ຜ-ຟຟລ, ລົງວັນທີ 02 ສິງຫາ 2018.
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການແຕ່ງຕັ້ງຄະນະກໍາມະການບໍລິຫານຈັດການນໍ້າ ແລະ ການຄຸ້ມຄອງການຜະລິດ ຂອງເຂື່ອນໄຟຟ້າແຕ່ລະແຫ່ງ ສະບັບເລກທີ 1558/ຜ-ຟຟລ, ລົງວັນທີ 26 ມິຖຸນາ 2018.
- ອີງຕາມ ການລາຍງານຈາກຜູ້ອໍານວຍການເຂື່ອນນໍ້າງື່ມ 1 ຄັ້ງວັນທີ່ 6 ຕຸລາ 2018.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານຮັບຊາບວ່າ: ພາຍຫຼັງທີເຂື່ອນໄຟຟ້ານໍ້າງື່ມ 1 ໄດ້ເປີດປະຕູນໍ້າລົ້ນ ແຕ່ວັນທີ 12 ສິງຫາ 2018. ມາເຖິງປະຈຸບັນນີ້ເຂື່ອນໄຟຟ້ານໍ້າງື່ມ 1 ໄດ້ປິດປະຕູນໍ້າລົ້ນຈາກ 30 ຊັງຕີແມັດ ເປັນ 0 ຊັງຕີແມັດ ຫຼຸດການລະບາຍນໍ້າຜ່ານປະຕູນໍ້າລົ້ນຈາກ 124.5 ແມັດກ້ອນ/ວິນາທີ ເປັນ 0 ຊຶ່ງເລີ່ມຈາກເວລາ 12:00 ໃນວັນທີ 6 ຕຸລາ 2018 ເປັນຕົ້ນໄປ ເພື່ອບໍລິຫານນໍ້າໃຫ້ມີປະສິດທິຜົນໃນຊ່ວງລະດູແລ້ງ.

ໃນເວລາ ເຂື່ອນໄຟຟ້ານໍ້າງື່ມ -1 ປິດປະຕູນໍ້າລົ້ນ ລະດັບ ນໍ້າໜ້າເຂື່ອນຢູ່ທີ່ 212.32 ແມັດ ທຽບໃສ່ລະດັບໜ້ານໍ້າທະເລ ຄາດວ່າຕອນທ່ຽງຂອງມື້ນີ້ລະດັບນໍ້າຈະຢູ່ທີ່ 212.30 ທຽບໃສ່ລະດັບໜ້ານໍ້າທະເລ ຊຶ່ງແມ່ນລະດັບນໍ້າເຕັມອ່າງທີ່ເຂື່ອນດັ່ງກ່າວຖືກອອກແບບມາ.

ດັ່ງນັ້ນ, ຈຶ່ງຂໍແຈ້ງການມາຍັງບັນດາທ່ານ ເພື່ອຮັບຊາບ.

**ຜູ້ອໍານວຍການໃຫຍ່**

ພະລັງງານ ແລະ ບໍ່ແຮ່ ກະຊວງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company ນະຄອນ ຫຼວງ ວຽງຈັນ

ລັດຕະນາ ປະທຸມວັນ

ຖະໜົນ ມິດຕະພາບ ລາວ-ໄທ, ບ້ານ ທົ່ງກາງ, ເມືອງ ສີສັດຕະນາກ, ຕູ້ ປ.ນ 2392, ນະຄອນຫລວງວຽງຈັນ.
ໂທລະສັບ: (856-21) 316142 ແຟັກ: (856-21) 316141. ອີເມລ: edlgenhq@edlgen.com.la; ເວັບໄຊທ໌: www.edlgen.com.la